# ບົດບັນທຶກຄວາມເຂົ້າໃຈ
# ລະຫວ່າງ
# ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ແລະ
# ລັດຖະບານ ແຫ່ງ ຣາຊະອານາຈັກໄທ
# ວ່າດ້ວຍ ການຮ່ວມມືຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

-------------------------------

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ຣາຊະອານາຈັກໄທ, ຊຶ່ງຕໍ່ໄປນີ້ເອີ້ນວ່າ " ຄູ່ພາຄີ ";

ດ້ວຍຄວາມຫ່ວງໃຍ ກ່ຽວກັບ ການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ຊຶ່ງຖືວ່າເປັນການລະເມີດສິດທິຢ່າງຮ້າຍແຮງ ແລະ ເປັນການດູໝິ່ນຢຽບຢ່ຳ ກຽດສັກສີຂອງຄວາມເປັນມະນຸດ, ທັງສົ່ງຜົນກະທົບທາງລົບ ຕໍ່ການພັດທະນາດ້ານສຸຂະພາບຮ່າງກາຍ, ຈິດໃຈ, ອາລົມ ແລະ ສິນລະທຳຂອງຄົນ ລວມເຖິງການສົ່ງຜົນເສຍຫາຍຕໍ່ສາຍໃຍ ແລະ ຄຸນຄ່າຂອງສັງຄົມ;

ໂດຍແນໃສ່ການສະກັດກັ້ນ ແລະ ປາບປາມກຸ່ມ ແລະ ອົງການອາຊະຍາກຳຂ້າມຊາດທີ່ມີສ່ວນກ່ຽວຂ້ອງໂດຍກົງກັບການຄ້າມະນຸດຕາມອະນຸສັນຍາຂອງສະຫະປະຊາຊາດວ່າດ້ວຍ ການສະກັດກັ້ນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ຊຶ່ງເພີ່ມເຕີມໃຫ້ແກ່ສົນທິສັນຍາສະຫະປະຊາຊາດ ເພື່ອຕ້ານອາຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງ ປີ 2000;

ໂດຍຍອມຮັບຫລັກການທີ່ລະບຸໄວ້ໃນ " ຖະແຫລງການບາງກອກ ວ່າດ້ວຍ ການຍົກຍ້າຍຖິ່ນຖານທີ່ບໍ່ເປັນໄປຕາມລະບຽບ ປີ 1999 ";

ໂດຍເຊື່ອໝັ້ນວ່າ ການປາບປາມອາຊະຍາກຳກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ດ້ວຍການຮ່ວມມືຊຶ່ງກັນ ແລະ ກັນກ່ຽວກັບການປະຕິບັດກົດໝາຍ ແລະ ຂັ້ນຕອນການດຳເນີນຄະດີອາຍາ ເປັນມາດຕະການໜຶ່ງທີ່ມີປະສິດທິພາບ;

ດ້ວຍຄວາມປາດຖະໜາທີ່ຈະເພີ່ມທະວີການຮ່ວມມືທີ່ເປັນປະໂຫຍດຮ່ວມກັນ ລະຫວ່າງສອງປະເທດ,

ໄດ້ຕົກລົງກັນດັ່ງຕໍ່ໄປນີ້:

## ຂອບເຂດຂອງບົດບັນທຶກຄວາມເຂົ້າໃຈ

<u>ມາດຕາ 1</u>: ບົດບັນທຶກຄວາມເຂົ້າໃຈສະບັບນີ້ ໃຊ້ກັບການຕ້ານການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 2 ຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້.

## ຄຳນິຍາມ

<u>ມາດຕາ 2</u>: ເພື່ອຈຸດປະສົງໃນການດຳເນີນງານ ຕາມບົດບັນທຶກຄວາມເຂົ້າໃຈສະບັບນີ້ :

ກ) "ການຄ້າມະນຸດ" ໝາຍເຖິງ ການຂົນຂວາຍຈັດຫາ, ຂົນສົ່ງ, ເຄື່ອນຍ້າຍ, ໃຫ້ທີ່ພັກເຊົາ ຫຼື ຮັບເອົາບຸກຄົນ, ໂດຍຮູບການຂົ່ມຂູ່, ໃຊ້ກຳລັງ ຫລື ການກະທຳອື່ນໆ ທີ່ມີລັກສະນະຂົ່ມຂູ່ທາງດ້ານຈິດໃຈ, ລັກພາຕົວ, ໃຊ້ກົນອຸບາຍຕົວະຍົວະຫລອກລວງ, ໃຊ້ອຳນາດໃນທາງທີ່ບໍ່ຖືກຕ້ອງ ຫລື ສວຍໃຊ້ຄວາມອ່ອນແອໄປໃນທາງທີ່ບໍ່ຖືກຕ້ອງ ຫລື ການໃຫ້ ຫລື ຮັບເງິນ ຫລື ຜົນປະໂຫຍດ ເພື່ອໃຫ້ຜູ້ອື່ນຍິນຍອມ ຈາກບຸກຄົນໜຶ່ງທີ່ມີອຳນາດເໜືອບຸກຄົນອື່ນ ໂດຍມີຈຸດປະສົງ ເພື່ອການສະແຫວງຫາຜົນປະໂຫຍດ. ການສະແຫວງຫາຜົນປະໂຫຍດແມ່ນລວມເຖິງການສະແຫວງຫາຜົນປະໂຫຍດຈາກຜູ້ອື່ນ ໂດຍການຄ້າປະເວນີ ຫລື ຮູບແບບອື່ນຂອງການສະແຫວງຫາຜົນປະໂຫຍດທາງເພດ, ແຮງງານ ຫລື ການບໍລິການແບບບັງຄັບ, ອອກແຮງງານ ຫລື ໃຊ້ແຮງງານແບບຂ້າທາດຫລື ການຕັດອະໄວຍະວະສ່ວນຕ່າງໆຂອງຮ່າງກາຍ.

ຂ) "ເດັກນ້ອຍ" ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ, ເວັ້ນເສຍແຕ່ກົດໝາຍຄູ່ພາຄີຈະລະບຸໄວ້ເປັນຢ່າງອື່ນ.

## ມາດຕະການປ້ອງກັນ

<u>ມາດຕາ 3</u>: ຄູ່ພາຄີ ຈະດຳເນີນການປັບປຸງແກ້ໄຂກົດໝາຍທີ່ຈຳເປັນ ແລະ ໃຊ້ມາດຕະການທີ່ເໝາະສົມ ເພື່ອຮັບປະກັນການປະຕິບັດກົດໝາຍ ແລະ ອຳນາດສານຂອງປະເທດຕົນ ໃຫ້ສອດຄ່ອງກັບຖະແຫຼງການ ຫລື ສົນທິສັນຍາສາກົນ ທີ່ລັດຖະບານປະເທດຕົນໄດ້ເຂົ້າຮ່ວມເປັນພາຄີ.

<u>ມາດຕາ 4</u>: ຄູ່ພາຄີ ຈະຈັດໃຫ້ມີໂຄງການເພື່ອການສຶກສາ ແລະ ຝຶກອາຊີບ ໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ ເພື່ອສ້າງໂອກາດການມີວຽກເຮັດງານທຳ ແລະ ຫລຸດຜ່ອນຄວາມສ່ຽງ ຈາກການຄ້າມະນຸດ.

<u>ມາດຕາ 5</u>: ຄູ່ພາຄີ ຈະພະຍາຍາມຢ່າງສຸດຄວາມສາມາດ ໃນການດຳເນີນມາດຕະການສະກັດກັ້ນການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໂດຍສ້າງໂຄງການໃຫ້ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ເພີ່ມການບໍລິການທາງສັງຄົມເຊັ່ນ: ບໍລິການຈັດຫາງານ, ສ້າງລາຍໄດ້ ແລະ ບໍລິການຮັກສາສຸຂະພາບໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍທີ່ມີຄວາມສ່ຽງຕໍ່ການຄ້າມະນຸດ,ເຜີຍແຜ່ຂໍ້ມູນຂ່າວສານໃຫ້ແກ່ປະຊາຊົນທົ່ວໄປກ່ຽວກັບປັດໃຈສ່ຽງຕໍ່ການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

## ການປົກປ້ອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

ມາດຕາ 6: ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຈະໄດ້ຮັບຄວາມຍຸຕິທຳ ແລະ ການປົກປ້ອງທາງກົດໝາຍ ໃນໄລຍະເວລາທີ່ລໍຖ້າ ຂັ້ນຕອນຂອງການສົ່ງກັບຄືນປະເທດ ຢ່າງເປັນທາງການ. ໜ່ວຍງານທີ່ກ່ຽວຂ້ອງຂອງຄູ່ພາຄີ ຈະຈັດຫາສະຖານທີ່ພັກເຊົາຊົ່ວຄາວ ແລະ ໃຫ້ການປົກປ້ອງຢ່າງເໝາະສົມແກ່ຜູ້ຖືກເຄາະຮ້າຍ ຕາມນະໂຍບາຍຂອງແຕ່ລະປະເທດ.

ມາດຕາ 7: ຄູ່ພາຄີ ຈະໃຊ້ມາດຕະການທີ່ເໝາະສົມຕໍ່ຜູ້ກະທຳຜິດໃນຄະດີຄ້າມະນຸດ ຕາມກົດໝາຍຂອງແຕ່ລະປະເທດ ແລະ ຈະໃຫ້ການຊ່ວຍເຫລືອທາງດ້ານກົດໝາຍຕໍ່ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຢ່າງຖືກຕ້ອງ ແລະ ຍຸຕິທຳ.

ມາດຕາ 8: ພາກສ່ວນທີ່ກ່ຽວຂ້ອງຂອງລັດ ຈະຮ່ວມມືກັບອົງການຈັດຕັ້ງອື່ນໆ ເພື່ອໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ, ການຮັກສາສຸຂະພາບ ແລະ ການດຳເນີນການທີ່ຈຳເປັນອື່ນໆ, ເພື່ອໃຫ້ການປົກປ້ອງແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄອບຄົວຕາມຄວາມເໝາະສົມ.

## ການຮ່ວມມືໃນການປາບປາມການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

ມາດຕາ 9: ພາກສ່ວນທີ່ມີໜ້າທີ່ຮັບຜິດຊອບ ໃນການບັງຄັບໃຊ້ກົດໝາຍຂອງສອງປະເທດ, ໂດຍສະເພາະຢູ່ຕາມບໍລິເວນຊາຍແດນ ຈະຮ່ວມມືກັນຢ່າງໃກ້ຊິດ ເພື່ອເປີດເຜີຍການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ທັງພາຍໃນປະເທດ ແລະ ຂ້າມຊາຍແດນ.

ມາດຕາ 10: ຄູ່ພາຄີ ຈະຈັດໂຄງການຝຶກອົບຮົມແບບຝ່າຍດຽວ ຫລື ຮ່ວມກັນໃຫ້ແກ່ທຸກພາກສ່ວນກ່ຽວຂ້ອງເພື່ອເພີ່ມຄວາມອາດສາມາດ ໃນການຈັດຕັ້ງປະຕິບັດກົດໝາຍ ທີ່ໃຊ້ໃນການດຳເນີນການສືບສວນ-ສອບສວນຄະດີການຄ້າມະນຸດ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍໃນຄະດີການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

ມາດຕາ 11: ກ) ຄູ່ພາຄີ ຈະສົ່ງເສີມການຮ່ວມມື ແບບທະວີພາຄີ ເພື່ອຕ້ານ ແລະ ສະກັດກັ້ນການຄ້າມະນຸດເຊັ່ນ: ການດຳເນີນຄະດີກັບຜູ້ຄ້າມະນຸດຂ້າມຊາດ, ການສົ່ງຜູ້ຮ້າຍຂ້າມແດນ, ໃຫ້ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງດ້ານກົດໝາຍ ໃນການດຳເນີນຄະດີອາຍາ; ແລະ

ຂ) ຄູ່ພາຄີຝ່າຍໜຶ່ງ ຈະໃຫ້ການຊ່ວຍເຫຼືອຊຶ່ງກັນ ແລະ ກັນແກ່ຄູ່ພາຄີອີກຝ່າຍໜຶ່ງ ທາງດ້ານກົດໝາຍຢ່າງກວ້າງຂວາງກ່ຽວກັບການດຳເນີນຄະດີຕໍ່ຜູ້ກະທຳຜິດ ໃນຖານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໂດຍສອດຄ່ອງກັບສັນຍາສາກົນຕ່າງໆ ທີ່ຄູ່ພາຄີໄດ້ລົງນາມ.

**ມາດຕາ 12:** ພາກສ່ວນທີ່ກ່ຽວຂ້ອງຂອງສອງປະເທດ ຈະຮ່ວມມືກັນເກັບກຳ ແລະ ແລກປ່ຽນຂໍ້ມູນ ແລະ ຂ່າວສານ ແລະ ລວບລວມຫລັກຖານທີ່ກ່ຽວຂ້ອງກັບການຄ້າມະນຸດເຊັ່ນ: ເສັ້ນທາງ, ສະຖານທີ່, ເຄືອຂ່າຍ, ຮູບແບບ ແລະ ວິທີການຄ້າມະນຸດ ລວມທັງຂໍ້ມູນກ່ຽວກັບປະຫວັດຂອງບຸກຄົນທີ່ຄ້າມະນຸດ.

**ມາດຕາ 13:** ພາກສ່ວນທີ່ກ່ຽວຂ້ອງຂອງສອງປະເທດ ຈະຕ້ອງສ້າງແຜນການປົກປ້ອງ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ແລະ ພະຍານບຸກຄົນ ອັນເນື່ອງມາຈາກການແກ້ແຄ້ນຫຼືການຂົ່ມຂູ່ໃນໄລຍະເວລາທີ່ມີການດຳເນີນຄະດີ ແລະ ຫລັງຈາກນັ້ນ ຕາມທີ່ເຫັນສົມຄວນ.

## ການສົ່ງກັບຄືນປະເທດ

**ມາດຕາ 14:** ກ) ໃນການຈັດສົ່ງຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກັບຄືນປະເທດ ພາກສ່ວນກ່ຽວຂ້ອງ ຈະຕ້ອງແຈ້ງລາຍຊື່ ແລະ ຂໍ້ມູນດ້ານຕ່າງໆຂອງຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໂດຍຜ່ານທາງການທູດລ່ວງໜ້າໃຫ້ຄູ່ພາຄີອີກຝ່າຍໜຶ່ງຊາບ ກ່ຽວກັບການກະກຽມ ຮັບ-ສົ່ງ ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກັບຄືນປະເທດ ຊຶ່ງຈະໄດ້ດຳເນີນການ ບົນພື້ນຖານການເຫັນດີຂອງສອງຝ່າຍ ໂດຍສອດຄ່ອງກັບເນື້ອໃນຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ ;

ຂ) ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຕ້ອງເປັນບຸກຄົນທີ່ມີສຳມະໂນຄົວ ຫລື ພູມລຳເນົາ ຫລື ຖິ່ນທີ່ຢູ່ ຫລື ມີການຢັ້ງຢືນ ຈາກອຳນາດການປົກຄອງທ້ອງຖິ່ນ ໃນປະເທດທີ່ຮັບ.

**ມາດຕາ 15:** ກ) ຄູ່ພາຄີ ຈະຖືເອົາອົງການຈັດຕັ້ງຂອງລັດ ທີ່ມີພາລະບົດບາດກ່ຽວຂ້ອງກັບວຽກງານດັ່ງກ່າວ ເປັນຈຸດປະສານງານ ເພື່ອຈັດຕັ້ງປະຕິບັດການ ຮັບ-ສົ່ງ ຜູ້ຖືກເຄາະຮ້າຍໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກັບຄືນປະເທດ;

ຂ) ຈຸດປະສານງານ ມີໜ້າທີ່ດັ່ງຕໍ່ໄປນີ້:

1) ກະກຽມການຮັບ-ສົ່ງ ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກັບຄືນປະເທດ;
2) ດຳເນີນການຮັບ-ສົ່ງ ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກັບຄືນປະເທດ ຕາມແຜນການທີ່ໄດ້ກະກຽມໄວ້;
3) ຮັບປະກັນຄວາມປອດໄພແກ່ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໃນຂັ້ນຕອນການຮັບ-ສົ່ງ ກັບຄືນປະເທດ;
4) ເອົາໃຈໃສ່ຕິດຕາມການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ;
5) ສ້າງຕັ້ງເຄືອຂ່າຍຂໍ້ມູນຂ່າວສານເພື່ອຕິດຕາມການດຳເນີນງານດ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ລະຫວ່າງໜ່ວຍງານບັງຄັບໃຊ້ກົດໝາຍ, ອົງການຈັດຕັ້ງພາຍໃນປະເທດ ແລະສາກົນທີ່ເຮັດວຽກປົກປ້ອງຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ແລະອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງ.

## ການກັບຄືນສູ່ສັງຄົມ

<u>ມາດຕາ 16</u>: ຄູ່ພາຄີ ຈະດຳເນີນການທຸກວິທີທາງເທົ່າທີ່ເປັນໄປໄດ້ ເພື່ອຊ່ວຍເຫລືອຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໃຫ້ກັບຄືນສູ່ສັງຄົມ ແລະ ຄອບຄົວໄດ້ຢ່າງປອດໄພ, ມີປະສິດທິພາບ ເພື່ອຟື້ນຟູກຽດສັກສີ, ເສລີພາບ ແລະ ຄວາມພາກພູມຂອງບຸກຄົນດັ່ງກ່າວ.

ມາດຕາ 17: ຄູ່ພາຄີ ຈະສ້າງໂຄງການຝຶກອົບຮົມວິຊາຊີບ ລວມທັງການຝຶກອົບຮົມທັກສະຊີວິດຕ່າງໆ ເພື່ອເພີ່ມໂອກາດທາງເລືອກໃນ ການດຳລົງຊີວິດ ແລະ ການກັບຄືນສູ່ສັງຄົມ ຢ່າງມີປະສິດທິພາບ ແລະ ສ້າງໂຄງການຝຶກອົບຮົມປູກຈິດສຳນຶກ ໃຫ້ແກ່ເຈົ້າໜ້າທີ່ ທີ່ມີສ່ວນກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຟື້ນຟູພັດທະນາ ຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

## ການປະຕິບັດງານຮ່ວມກັນ

<u>ມາດຕາ 18</u>: ກ) ຄູ່ພາຄີຈະຈັດຕັ້ງຄະນະປະຕິບັດງານຮ່ວມ ເພື່ອດຳເນີນງານຮ່ວມກັນ ຊຶ່ງມາຈາກອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງກັບການຕ້ານການຄ້າມະນຸດ;

ຂ) ຄະນະປະຕິບັດງານຮ່ວມ ຈະມີກອງປະຊຸມສາມັນ ຫລື ວິສາມັນ ຂຶ້ນກັບຄວາມຈຳເປັນ;

ຄ) ຄະນະປະຕິບັດງານຮ່ວມ ມີໜ້າທີ່ດັ່ງຕໍ່ໄປນີ້:

1) ວາງແຜນດຳເນີນງານຮ່ວມກັນ ແລະ ຈັດຕັ້ງປະຕິບັດ ເນື້ອໃນບົດບັນທຶກຄວາມເຂົ້າໃຈສະບັບນີ້;
2) ດຳເນີນງານຮ່ວມກັບຄູ່ພາຄີ ໃນຂົງເຂດວຽກງານ ຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ;
3) ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ເພື່ອວາງແຜນຍຸດທະສາດ ທິດທາງປະຕິບັດ ແລະ ຂອບເຂດການດຳເນີນງານທີ່ຈຳເປັນອື່ນໆ ໃນວຽກງານຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຕາມເນື້ອໃນບົດບັນທຶກຄວາມເຂົ້າໃຈສະບັບນີ້;
4) ປະເມີນຜົນການດຳເນີນງານຮ່ວມກັນ ຂອງຄູ່ພາຄີ ແລະ ລາຍງານຜົນໃຫ້ການຈັດຕັ້ງ ທີ່ກ່ຽວຂ້ອງຂອງແຕ່ລະຝ່າຍຊາບ ຢ່າງເປັນປົກກະຕິ;
5) ສ້າງຂໍ້ສະເໜີ ເພື່ອສົ່ງເສີມການຮ່ວມມືຊຶ່ງກັນ ແລະ ກັນ ລະຫວ່າງຄູ່ພາຄີ,ໃນການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ; ແລະ
6) ຮ່ວມກັບຄູ່ພາຄີ ທົບທວນການຈັດຕັ້ງປະຕິບັດ ບົດບັນທຶກຄວາມເຂົ້າໃຈສະບັບນີ້ໃນທຸກໆ 3 ປີ.

## ບົດບັນຍັດສຸດທ້າຍ

<u>ມາດຕາ 19</u>: ຄູ່ພາຄີ ຈະພະຍາຍາມແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຕີຄວາມໝາຍ ແລະ ການປະຕິບັດບົດບັນທຶກຄວາມເຂົ້າໃຈສະບັບນີ້ ໂດຍການເຈລະຈາ.

<u>ມາດຕາ 20</u>: ບົດບັນທຶກຄວາມເຂົ້າໃຈສະບັບນີ້ ສາມາດປັບປຸງແກ້ໄຂໄດ້ ໂດຍການຕົກລົງເຫັນດີນຳກັນລະຫວ່າງຄູ່ພາຄີ.

<u>ມາດຕາ 21</u>: ກ) ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຂ) ຄູ່ພາຄີ ຝ່າຍໃດຝ່າຍໜຶ່ງ ສາມາດຍົກເລີກບົດບັນທຶກຄວາມເຂົ້າໃຈສະບັບນີ້ ໃນເວລາໃດກໍໄດ້ ໂດຍແຈ້ງເປັນລາຍລັກອັກສອນໃຫ້ຄູ່ພາຄີອີກຝ່າຍໜຶ່ງຊາບ ໂດຍຜ່ານທາງການທູດ ແລະ ການຍົກເລີກດັ່ງກ່າວ ຈະມີຜົນບັງຄັບໃຊ້ ຫລັງຈາກຫົກເດືອນ ນັບແຕ່ມື້ທີ່ໄດ້ຮັບໜັງສືແຈ້ງການຍົກເລີກ.

ເພື່ອເປັນຫຼັກຖານ,ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍສິດອຳນາດຢ່າງຖືກຕ້ອງຈາກລັດຖະບານຂອງຕົນ ຈຶ່ງໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈສະບັບນີ້.

ເຮັດທີ່ ບາງກອກ, ວັນທີ 13 ກໍລະກົດ-2005; ເປັນສອງສະບັບຕົ້ນ, ເປັນພາສາລາວ, ພາສາໄທ ແລະ ພາສາອັງກິດ, ທຸກສະບັບມີຄຸນຄ່າເທົ່າທຽມກັນ. ໃນກໍລະນີ ທີ່ມີຄວາມແຕກຕ່າງກັນໃນການຕີຄວາມໝາຍ ພາສາອັງກິດ ຈະໃຊ້ເປັນບ່ອນອີງ.

| ຕາງໜ້າ ລັດຖະບານ<br>ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ | ຕາງໜ້າ ລັດຖະບານ<br>ແຫ່ງ ຣາຊະອານາຈັກໄທ |
| --- | --- |
| ເລ ກາກັນຍາ<br>ຮັກສາການ ລັດຖະມົນຕີວ່າການ ກະຊວງແຮງງານ<br>ແລະ ສະຫວັດດີການສັງຄົມ | ປຣະຊາ ມາລີນົນ<br>ລັດຖະມົນຕີວ່າການ ກະຊວງພັດທະນາສັງຄົມ<br>ແລະ ຄວາມໝັ້ນຄົງ ຂອງມະນຸດ |